ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****************

ແຂວງຄໍາມ່ວນ
ພະແນກອຸດສາຫະກໍາ ແລະ ການຄ້າ
(ຄະນະຊີ້ນໍາການປະມູນຂາຍໄມ້ຢຶດຂັ້ນແຂວງ)

ເລກທີ: 220 /ອຄ.ຄມ
ຄໍາມ່ວນ, ວັນທີ: 20 ເມສາ 2017

# ແຈ້ງການ

ເຖິງ: - ທ່ານປະທານ ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ.
- ທ່ານປະທານ ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ ປະຈໍາແຂວງຄໍາມ່ວນ.
- ສະມາຄົມໂຮງງານປຸງແຕ່ງໄມ້ ແລະ ເຟີນີເຈີ້ໄມ້ສໍາເລັດຮູບ ທົ່ວປະເທດ.
- ຜູ້ອໍານວຍການ ໂຮງງານປຸງແຕ່ງໄມ້ ແລະ ເຟີນີເຈີ້ໄມ້ສໍາເລັດຮູບ ທົ່ວປະເທດ.

ເລື່ອງ: ການປະມູນຂາຍໄມ້ຢຶດ ຂອງແຂວງຄໍາມ່ວນ ຄັ້ງທີ III.

- ອີງຕາມຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ: 15/ນຍ, ລົງວັນທີ: 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມຄໍາສັ່ງແນະນໍາ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ: 0336/ອຄ.ກຂອ, ລົງວັນທີ: 13 ມີນາ 2017 ເລື່ອງແນະນໍາການປະມູນຂາຍໄມ້ທີ່ຢຶດເປັນຂອງລັດ.
- ອີງຕາມຂໍ້ຕົກລົງຂອງເຈົ້າແຂວງ ໆ ຄໍາມ່ວນ ສະບັບເລກທີ: 2524/ຈຂ.ຄມ, ລົງວັນທີ: 20 ທັນວາ 2016 ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການປະມູນຂາຍໄມ້ຢຶດ, ໄມ້ທ້ອນໂຮມຕ່າງໆ.
- ອີງຕາມແຈ້ງການ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ: 1813/ອຄ.ກຂອ, ລົງວັນທີ: 04 ກັນຍາ 2015 ວ່າດ້ວຍລາຄາພັນທະໄມ້ ສົກປີ 2014-2015 ແລະ ສົກປີ 2015-2016.

ພະແນກອຸດສາຫະກໍາ ແລະ ການຄ້າແຂວງ (ຄະນະຊີ້ນໍາການປະມູນຂາຍໄມ້ຢຶດຂັ້ນແຂວງ) ຂໍຖືເປັນກຽດຢ່າງສູງ ແຈ້ງການມາຍັງບັນດາທ່ານ ເພື່ອໄດ້ຮັບຊາບ ກ່ຽວກັບການຈັດຕັ້ງປະມູນຂາຍໄມ້ຢຶດ ຂອງແຂວງຄໍາມ່ວນ ຄັ້ງທີ III, ເຊິ່ງລາຍລະອຽດມີດັ່ງລຸ່ມນີ້:

I. **ໄມ້ຢຶດຂອງແຂວງຄໍາມ່ວນ ທີ່ຈະປະມູນຂາຍປະກອບມີ:**

1. ໄມ້ຢຶດຢູ່ເມືອງບົວລະພາ ບໍລິມາດ: 1,033.640 ແມັດກ້ອນ.
2. ໄມ້ຢຶດຢູ່ດ່ານພາສີນາເພົ້າ-ຈະໝໍ່ ບໍລິມາດ: 156.634 ແມັດກ້ອນ ແລະ 22,014 ກິໂລ.
3. ໄມ້ຢຶດພະແນກຊັບພະຍາກອນທໍາມະຊາດ-ສິ່ງແວດລ້ອມບໍລິມາດ: 137.342 ແມັດກ້ອນແລະ 7,290ກິໂລ.
4. ໄມ້ຢຶດຢູ່ກອງກວດກາປ່າໄມ້ແຂວງ ບໍລິມາດ: 82.733 ແມັດກ້ອນ ແລະ 34,124 ກິໂລ.
5. ໄມ້ຢຶດຢູ່ເຈົ້າໜ້າທີ່ກວດກາການຄ້າແຂວງ ບໍລິມາດ: 67.085 ແມັດກ້ອນ ແລະ 6,530 ກິໂລ.
6. ໄມ້ຢຶດຫ້ອງການຊັບພະຍາກອນທໍາມະຊາດ-ສິ່ງແວດລ້ອມເມືອງ ບໍລິມາດ: 40.619 ແມັດກ້ອນ.
7. ໄມ້ຢຶດຂອງສະເພາະກິດຢູ່ລັງຄັງ ບໍລິມາດ: 3.143 ແມັດກ້ອນ ແລະ 75 ກິໂລ.

**ລວມບໍລິມາດໄມ້ຢຶດປະມູນຂາຍທັງໝົດ: 1,521.196 ແມັດກ້ອນ ແລະ ນໍ້າໜັກ: 70,033 ກິໂລ.**

*(ສ່ວນລາຍລະອຽດຂອງໄມ້ຢຶດແມ່ນມີລົດໄມ້ ແລະ ຕາຕະລາງສັງລວມຢູ່ໃນຊອງປະມູນຂາຍໄມ້ຢຶດ).*

II. **ວ່າດ້ວຍເງື່ອນໄຂເພື່ອເຂົ້າຮ່ວມການປະມູນຊື້ໄມ້ຢຶດ:**

1. ຕ້ອງເປັນໂຮງງານອຸດສາຫະກໍາປຸງແຕ່ງໄມ້ ທີ່ໄດ້ຜ່ານການດັດສົມຕາມມາດຕະຖານອາຄານໂຮງງານ ຕາມຂໍ້ຕົກລົງ ສະບັບເລກທີ: 0719/ອຄ, ລົງວັນທີ: 03 ເມສາ 2009 ແລະ ເປັນສະມາຊິກ ຂອງສະມາຄົມອຸດສາຫະກໍາປຸງແຕ່ງໄມ້ ແຫ່ງຊາດ ຫຼື ແຂວງຄໍາມ່ວນ.

2. ມີໃບທະບຽນວິສາຫະກິດ, ໃບທະບຽນອາກອນ, ໃບອະນຸຍາດດຳເນີນກິດຈະການດ້ານທຸລະກິດໄມ້ ແລະ ໃບອະນຸຍາດອື່ນໆ ຖືກຕ້ອງຕາມລະບຽບຫຼັກການ ແລະ ຕ້ອງເປັນໂຮງງານໄມ້ທີ່ບໍ່ເຄີຍກະທຳຜິດດ້ານທຸລະກິດໄມ້, ບໍ່ມີໜີ້ສິນຄ້າງຊຳລະຄ່າພັນທະໄມ້ກັບທາງພາກລັດ.

3. ວ່າດ້ວຍຖານະການເງິນຂອງໂຮງງານໄມ້ ເພື່ອເຂົ້າຮ່ວມການປະມູນຊື້ໄມ້ຢືດ:

- ຕ້ອງເປັນແຊັກເງິນສົດ ທີ່ຂຽນເນື້ອໃນກ່ຽວກັບການປະມູນຊື້ໄມ້ຢຶດ ໂດຍມູນຄ່າເງິນ ຕ້ອງບໍ່ໃຫ້ຫຼຸດຈາກລາຄາກາງຂາຍໄມ້ຢຶດທີ່ໄດ້ກຳນົດໄວ້ (ລາຄາສະເໜີຊື້ໄມ້ຂອງໂຮງງານ) ໂດຍໄດ້ຮັບການເຊັນຢັ້ງຢືນຈາກທະນາຄານກ່ຽວຂ້ອງວ່າມີມູນຄ່າເງິນແທ້ຈິງ ແລະ ສາມາດຖອນເງິນໄດ້ທັນທີ.

4. ໃນການເຂົ້າຮ່ວມການປະມູນຊື້ໄມ້ຢຶດ ຜູ້ເຂົ້າຮ່ວມປະມູນຊື້ໄມ້ ຕ້ອງສົ່ງຊອງປະມູນຊື້ໄມ້ຢຶດ ມາຍັງຄະນະກຳມະການປະມູນຂາຍໄມ້ຢຶດຂັ້ນແຂວງ ຈຳນວນ 02 ຊອງຄື:

- ຊອງເງື່ອນໄຂຂອງໂຮງງານໄມ້ ທີ່ເຂົ້າຮ່ວມການປະມູນຊື້ໄມ້ຢຶດ (ເອກະສານຕ່າງໆຂອງໂຮງງານ).
- ຊອງໃສ່ລາຄາປະມູນຊື້ໄມ້ຢຶດຂອງທາງໂຮງງານ.

5. ການປະມູນຊື້ໄມ້ຢຶດ ແມ່ນໃຫ້ໃສ່ລາຄາປະມູນຊື້ຕາມລາຄາກາງ ທີ່ຄະນະກຳມະການປະມູນຂາຍໄມ້ຢຶດໄດ້ກຳນົດໄວ້ຕາມແຕ່ລະລົດ, ໂດຍບໍ່ໃຫ້ເລືອກເອົາສະເພາະໄມ້ທີ່ທາງໂຮງງານໄມ້ ຕ້ອງການຢ່າງເດັດຂາດ.

6. ໃນລາຄາກາງປະມູນຂາຍໄມ້ຢຶດ ປະກອບມີຄ່າພັນທະໄມ້, ຄ່າອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ.

7. ລາຄາກາງປະມູນຂາຍໄມ້ຢຶດດັ່ງກ່າວ ແມ່ນກຳນົດຂຶ້ນ ເພື່ອເປັນການສົ່ງເສີມ ໃຫ້ນຳເອົາໄມ້ໄປປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ຈຳໜ່າຍພາຍໃນ ຫຼື ສົ່ງອອກຂາຍຕ່າງປະເທດ.

8. ຜູ້ທີ່ຊະນະການປະມູນຊື້ໄມ້ຢຶດ ຕ້ອງປະຕິບັດຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ: 15/ນຍ, ລົງວັນທີ: 13 ພຶດສະພາ 2016 ແລະ ຂໍ້ຕົກລົງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ: 1833/ອຄ, ລົງວັນທີ: 03 ຕຸລາ 2016 ວາງອອກຢ່າງເຂັ້ມງວດ.

9. ໂຮງງານປຸງແຕ່ງໄມ້ ຫຼື ເຟີນີເຈີ້ໄມ້ໃດ ທີ່ຊະນະການປະມູນຊື້ໄມ້ຢຶດ ໃຫ້ປະສານສົມທົບກັບຄະນະກຳມະການປະມູນຂາຍໄມ້ຢຶດຂັ້ນແຂວງ ເພື່ອຂໍພະນັກງານວິຊາການກ່ຽວຂ້ອງ ຮ່ວມກັນລົງກວດກາໄມ້ຕົວຈິງຢູ່ສະໜາມ ພ້ອມທັງເຊັນບົດບັນທຶກການກວດການມອບ-ຮັບໄມ້, ແລ້ວຈຶ່ງເຊັນສັນຍາຊື້-ຂາຍໄມ້ຢຶດ ແລະ ສະໂນດນຳສົ່ງສັນຍາຊື້-ຂາຍໄມ້ໄປຈົດທະບຽນຢູ່ຫ້ອງການຄຸ້ມຄອງຊັບສິນແຂວງ ແລະ ຊຳລະເງິນຄ່າພັນທະໄມ້ໃຫ້ສຳເລັດ ຕາມລະບຽບຫຼັກການໂດຍທັນທີ, ຖ້າຜູ້ຊະນະການປະມູນທີ 01 ບໍ່ສາມາດປະຕິບັດໄດ້ຕາມເງື່ອນໄຂທີ່ກ່າວມາຂ້າງເທິງ ແມ່ນມອບໃຫ້ຜູ້ຊະນະການປະມູນທີ 02 ເປັນຜູ້ຈັດຕັ້ງປະຕິບັດ ການເຊັນສັນຍາຊື້-ຂາຍໄມ້ຢຶດ ແລະ ຖອກເງິນຄ່າພັນທະ, ອາກອນໄມ້ແທນ ໂດຍບໍ່ມີການຕໍ່ລອງໃດໆທັງນັ້ນ.

III. ວ່າດ້ວຍວັນເວລາ ແລະ ລາຄາຂອງຊອງປະມູນຂາຍໄມ້ຢຶດ:

- ກຳນົດເວລາຂາຍຊອງປະມູນໄມ້: ແຕ່ວັນທີ: 20 ເມສາ 2017 ເຖິງ 04 ພຶດສະພາ 2017.
- ກຳນົດເວລາເປີດຊອງປະມູນໄມ້: ເວລາ 09 ໂມງ 30 ນາທີ, ຂອງວັນທີ: 05 ພຶດສະພາ 2017.
- ສະຖານທີ່ເປີດຊອງປະມູນໄມ້: ຫ້ອງປະຊຸມໃຫຍ່ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຄຳມ່ວນ.
- ສຳລັບຊອງປະມູນໄມ້ຢຶດ ໃຫ້ພົວພັນຊື້ໄດ້ທີ່ ຂະແໜງຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຄຳມ່ວນ ໃນລາຄາຊອງລະ 1,000,000 ກີບ (ໜຶ່ງລ້ານກີບ).

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງບັນດາທ່ານ ຜູ້ທີ່ສົນໃຈເພື່ອຮັບຊາບ.

ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງຄຳມ່ວນ

(ຄະນະຊີ້ນຳການປະມູນຂາຍໄມ້ຢຶດຂັ້ນແຂວງ)

ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງຄຳມ່ວນ

ທອງໄຊ ມັງໜໍ່ເມກ